**ໂຮງຮຽນວັນອາທິດ**

**ວັນອາທິດ ທີ 31 ເດືອນກໍຣະກະດາ 2022 (07-31-2022)**

# ຄວາມຮັກເບິ່ງເໝືອນແນວໃດ

*ເມື່ອໃດທີ່ທ່ານມີຄວາມປະທັບໃຈແທ້ໆກັບຂອງປອມ?*

**ຈຸດສຳຄັນຂອງບົດຮຽນ:** ເຮົາຕ້ອງຮັກຄົນອື່ນເໝືອນດັ່ງທີ່ພຣະເຈົ້າຮັກເຮົາ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ພະນັກງານບໍຣິການທະນາຄານເປັນວຽກທີ່ບໍ່ຄ່ອຍມີໜ້າມີຕາຫຼາຍປານໃດ. ການນັບເງິນທີ່ໜ້າເບື່ອໜ່າຍ, ການແຈກຢາຍເງິນໂດລາທີ່ອາດມີເຊື້ອໂຣກ, ແລະໃຫ້ບໍຣິການກັບຄົນທີ່ເບິ່ງຄືຟ້າວຝັ່ງທັງວັນ. ແຕ່ວິທີການທັງໝົດທີ່ເຂົາຕ້ອງມີ, ສິ່ງນຶ່ງແມ່ນມີຄວາມສຳຄັນຫຼາຍ: ຄວາມສາມາດໃນການກວດສອບເງິນໂດລາປອມ. ພະນັກງານບໍຣິການທະນາຄານຈະຕ້ອງຈັບເບິ່ງເງິນໂດລາແລະ, ໃນທັນທີທັນໃດນັ້ນ, ເຂົາສາມາດສັງເກດແລະບອກໄດ້ໃນທັນທີວ່າອັນໃດຄືເງິນໂດລາປອມອັນໃດຄືເງິນໂດລາແທ້.

ເພື່ອຮັບປະສົບການເພີ້ມຂຶ້ນ, ພະນັກງານທະນາຄານບໍ່ໄດ້ສຶກສາການປອມແປງທະນາບັດ; ພວກເຂົາຮຽນຮູ້ສິ່ງທີ່ແທ້ຈິງ, ໂດຍຮູ້ລາຍລະອຽດຂອງຕົ້ນສະບັບຢ່າງລະອຽດຖີ່ຖ້ວນ, ເຂົາສາມາດຂັດເລືອກສິ່ງທີ່ແປກປອມບໍ່ກົງກັນໄດ້. ຖ້າພວກເຮົາຈະເປັນຄົນທີ່ຢູ່ໃນຄວາມຮັກຂອງພຣະເຈົ້າ, ພວກເຮົາຕ້ອງຮູ້ວ່າຄວາມຮັກຂອງພຣະອົງນັ້ນເປັນຄືແນວໃດ. ແລະນັບຕັ້ງແຕ່ພຣະເຈົ້າເອງເປັນຄວາມຮັກ, ພວກເຮົາຕ້ອງຮູ້ຈັກພຣະລັກສນະຂອງພຣະອົງ. ເຖິງການປອມແປງມີຫຼາຍ. ມີຫຼາຍຄົນເບິ່ງຄືວ່າເປັນຂອງຈິງແຕ່ບໍ່ໄດ້ມາຈາກພຣະເຈົ້າຫຼືເປັນຕົວແທນຂອງພຣະເຈົ້າຜູ້ເປັນຄວາມຮັກ. ຜູ້ທີ່ເຊື່ອທີ່ແທ້ຈິງແມ່ນຜູ້ທີ່ໄດ້ຮັບການປ່ຽນແປງໂດຍຄວາມຮັກທີ່ມາຈາກພຣະເຈົ້າແລະເຂົາຈະຮັກດັ່ງທີ່ພຣະອົງຮັກ. ພຣະເຈົ້າເອົາຈິງເອົາຈັງກັບຄວາມຈິງ- ແລະພວກເຮົາກໍຄວນທີ່ຈະເປັນດັ່ງນັ້ນ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

## ສຶກສາພຣະຄັມພີ

### 1. 1 ໂກຣິນໂທ 13:1-3.

*1 ເຖິງແມ່ນເຮົາເວົ້າພາສາແປກໄດ້ ຈະເປັນພາສາມະນຸດຫລືພາສາເທວະດາກໍດີ ແຕ່ບໍ່ມີຄວາມຮັກເຮົາກໍເປັນເໝືອນຄ້ອງຫລືແຊ່ງທີ່ສົ່ງສຽງດັງອຶກກະທຶກ. 2 ເຖິງແມ່ນເຮົາປະກາດພຣະທັມໄດ້, ແລະເຂົ້າໃຈໃນຂໍ້ລັບເລິກທັງປວງແລະມີຄວາມຮູ້ທັງສິ້ນ ແລະມີຄວາມເຊື່ອຢ່າງຄົບຖ້ວນພໍຈະບອກໃຫ້ພູເຄື່ອນທີ່ໄປໄດ້ ແຕ່ບໍ່ມີຄວາມຮັກ ເຮົາກໍບໍ່ມີຄ່າອັນໃດ. 3 ເຖິງແມ່ນເຮົາຈະບໍຣິຈາກສິ່ງຂອງຈົນໝົດຫລືສລະຕົວເຮົາໃຫ້ເຂົາເຜົາໄຟ ແຕ່ບໍ່ມີຄວາມຮັກ ເຮົາກໍບໍ່ໄດ້ປໂຍດຫຍັງໝົດ.*

ເພື່ອໃຫ້ເຂົ້າໃຈຄຳສອນຂອງໂປໂລກ່ຽວກັບລັກສນະຂອງຄວາມຮັກຢ່າງສົມບູນແບບ. ໃຫ້ກັບໄປເບິ່ງຂໍ້ພຣະຄັມພີກ່ອນຈະເລີ້ມຕົ້ນບົດທີ 13. ຈົ່ງຈົດຈຳໄວ້ວ່າໂປໂລກຳລັງຂຽນຈົດໝາຍສະບັບນຶ່ງໃນເບື້ອງຕົ້ນນັ້ນບໍ່ມີບົດຫຼືຂໍ້. ໄດ້ຮັບການດົນໃຈຈາກພຣະວິນຍານຂອງພຣະເຈົ້າ, ລາວໄດ້ເຊື່ອມຈາກຈຸດນຶ່ງໄປຫາອີກຈຸດນຶ່ງໃນ 1 ໂກຣິນໂທ 12, ໂປໂລໄດ້ຂຽນກ່ຽວກັບຂອງປະທານຝ່າຍວິນຍານແລະການນຳໃຊ້ຕາມການມອບໝາຍຈາກພຣະເຈົ້າເພື່ອເປັນຜົນປໂຍດໃນການກໍ່ສ້າງຄຣິສຕະຈັກ. ທ່ານໄດ້ອະທິບາຍວິທີທີ່ພຣະວິນຍານບໍຣິສຸດໃຫ້ຂອງປະທານທີ່ຫຼາກຫຼາຍແກ່ພວກເຮົາແລະພວກເຮົາຕ້ອງການເຊິ່ງກັນແລະກັນຄືກັນກັບຮ່າງກາຍທີ່ຕ້ອງການແຂນຂາແລະອະວັຍວະທັງໝົດ. ເຊັ່ນດຽວກັບທີ່ພວກເຮົາບໍ່ມີຮ່າງກາຍທີ່ມີກະເພາະອາຫານຫຼືດັງ, ພວກເຮົາທຸກຄົນບໍ່ມີຂອງປະທານອັນດຽວກັນໃນພຣະຄຣິດ.

ຕໍ່ຈາກນັ້ນໂປໂລໄດ້ແນະນໍາຄຣິສຕຽນຊາວເມືອງໂກຣິນໂທໃຫ້ຫັນໜ້າໄປຫາອັນທີ່ທ່ານບອກວ່າເປັນສິ່ງທີ່ເອີ້ນວ່າ "ທາງທີ່ດີກ່ວາ" (1 ໂກຣິນໂທ 12:31). ໂປໂລກໍາລັງຊີ້ໃຫ້ເຫັນບາງສິ່ງທີ່ດີກ່ວາການມຸ່ງໄປເຖິງຂອງປະທານທາງວິນຍານຂອງພວກເຮົາ. ມັນອາດຈະເບິ່ງຄືວ່າທ່ານກໍາລັງປ່ຽນແປງຫົວເຣື່ອງ, ແຕ່ແທນທີ່ຈະເປັນແນວນັ້ນ, ໂປໂລໄດ້ເຊື່ອມຕໍ່ການສອນຂອງລາວກ່ຽວກັບຂອງປະທານທາງຝ່າຍວິນຍານກັບຄວາມຕ້ອງການຂອງຄວາມຮັກໃນທຸກສິ່ງທີ່ພວກເຮົາເຮັດ.

ພວກເຮົາມັກຈະໄດ້ຍິນ 1 ໂກຣິນໂທ 13 ໄດ້ຖືກນໍາມາໃຊ້ໃນງານແຕ່ງງານແລະພວກເຮົາເຫັນວ່າມັນເປັນໂຄງສ້າງພື້ນຖານຂອງຄວາມຮັກທີ່ເລິກເຊິ່ງ, ໂດຍສະເພາະຂໍ້ 4-7. ແຕ່ຂໍ້ 1-3 ໄດ້ເປັນຂໍ້ແນະນໍາປໂຍກຄວາມໝາຍຂອງຄວາມຮັກດ້ວຍຄວາມຈິງໃຈ, ອັນນີ້ງທີ່ທ່ານອາດຈະໄດ້ເຫັນຄືຮູບໄມ້ກາງແຂນທີ່ຢູ່ໃນກາງຮູບຫົວໃຈທີ່ຖັກໃສ່ໃນໝອນ. ໂປໂລກ່າວວ່າມັນເປັນໄປໄດ້ທີ່ຈະເປັນການຖືກຕ້ອງທາງທິສດີ, ມີຂອງປະທານທາງວິນຍານ, ແຕ່ຂາດສິນທັມ, ແລະການເສັຽສລະທີ່ໜ້າປະທັບໃຈ, ແຕ່ຂາດຈຸດໝາຍ. ຈົ່ງສັງເກດເບິ່ງພຶດຕິກໍາແລະຂອງປະທານທາງວິນຍານທີ່ທ່ານພະຍາຍາມຈະອະທິບາຍ.

*ເປັນຫຍັງກິຈກໍາທາງສາສນາຈຶ່ງບໍ່ມີຄວາມໝາຍຖ້າປາສຈາກຄວາມຮັກ?*

- **ເວົ້າພາສາ.** ນີ້ແມ່ນຂອງປະທານທາງວິນຍານທີ່ສຸດຍອດພຣະເຈົ້າໄດ້ປະທານໃຫ້ພຽງແຕ່ບາງຄົນ. ຂອງປະທານນີ້ຈະຖືກນໍາມາໃຊ້ໃນວິທີການສະເພາະ. ແຕ່ການເວົ້າພາສາອື່ນໆແມ່ນເປັນພຽງແຕ່ສຽງສາມັນທັມມະດາທີ່ບໍ່ມີຈິດໃຈຂອງຄວາມຮັກ.
- **ຄໍາພະຍາກອນ.** ຄົນຄຣິສຕຽນທີ່ມີຂອງປະທານແຫ່ງການທໍານວາຍໄດ້ຮັບຂໍ້ຄວາມຈາກພຣະວິນຍານບໍຣິສຸດໂດຍສະເພາະສໍາລັບຄຣິສຕະຈັກນັ້ນ. ມັນຈະເປັນການເຕືອນສະຕິໃນການບາບຂອງເຂົາແລະຊັກຊວກໃຫ້ເຂົາກັບໃຈໃໝ່, ແຕ່ມັນຈະບໍ່ມີຄວາມໝາຍອັນໃດເກີດຂຶ້ນຖ້າຫາກວ່າຜູ້ທີ່ກ່າວນັ້ນເວົ້າດ້ວຍຂາດຄວາມຮັກ.
- **ຄວາມຮູ້ແລະຄວາມເຂົ້າໃຈໃນຂໍ້ເລິກລັບຂອງພຣະເຈົ້າ**. ການມີຄວາມເຂົ້າໃຈດັ່ງກ່າວຮຽກຮ້ອງໃຫ້ມີການຊີ້ນໍາຂອງພຣະວິນຍານ. ຄຣິສຕຽນທີ່ມີຂອງປະທານນີ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງເຖິງພຣະຄໍາຂອງພຣະເຈົ້າ, ການດຶງດູດຄວາມເຂົ້າໃຈໃຫ້ກັບຄົນອື່ນໃນຄຣິສຕະຈັກ. ພວກເຂົາທຸກຄົນແມ່ນອຸທິດຈິດໃຈເພື່ອຈະຮູ້ຈັກແລະເຂົ້າໃຈພຣະຄັມພີ. ເຖິງປານນັ້ນ, ຖ້າປາສຈາກຄວາມຮັກ, ສະຕິປັນຍາຂອງພວກເຂົາຈະບໍ່ມີປະສິດທິພາບ.
- **ຄວາມເຊື່ອ.** ຜູ້ທີ່ມີຄວາມເຊື່ອຈະມີພລັງທາງວິນຍານຈາກພຣະເຈົ້າທີ່ຍິ່ງໃຫ່ຽກ່ວາຂໍ້ກົດເກນຂອງທັມມະຊາດ. ແນ່ນອນວ່າລາວມີຄວາມສັມພັນກັບພຣະຄໍາຂອງພຣະເຈົ້າແລະພຣະສັນຍາຂອງພຣະອົງ. ລາວເຊື່ອ ພຣະເຈົ້າສໍາລັບສິ່ງທີ່ເບິ່ງຄືຈະເປັນໄປບໍ່ໄດ້. ຜູ້ທີ່ມີຂອງປະທານແຫ່ງຄວາມເຊື່ອແມ່ນກ້າຫານໃນການກະທໍາແລະມີພລັງທາງວິນຍານ. ແຕ່ພວກເຂົາກໍເໝືອນກັນ, ບໍ່ມີຫັຽງຖ້າບໍ່ມີຄວາມຮັກ.
- **ການເສັຽສຣະ.** ຕົວຢ່າງສຸດທ້າຍຂອງໂປໂລແມ່ນຜູ້ທີ່ຍອມເສັຽສຣະທຸກຢ່າງທີ່ລາວເປັນເຈົ້າຂອງ, ແມ່ນແຕ່ ສຣະຊີວິດເພື່ອເຫັນແກ່ພຣະຄຣິດ. ແນ່ນອນ, ພວກເຮົາຄວນເບິ່ງບຸກຄົນດັ່ງກ່າວເປັນຕົວຢ່າງຂອງພວກເຮົາໃນຊີວິດແລະຄວາມຕາຍ. ເຖິງຢ່າງໃດກໍຕາມ, ຖ້າຫາກວ່າຜູ້ນີ້ພຽງແຕ່ກະທໍາເພື່ອອວດອ້າງເຖິງການກະທໍາດີຂອງຕົນແລະບໍ່ມີຈິດໃຈແຫ່ງຄວາມຮັກ. ລາວກໍບໍ່ໄດ້ດີໄປກ່ວາການເສັຽສຣະຂອງລາວນັ້ນ.

ຄວາມຮັກເປັນສິ່ງຈໍາເປັນຕໍ່ທຸກດ້ານຂອງຊີວິດຄຣິສຕຽນ. ວິທີດຽວທີ່ຊີວິດຂອງທ່ານແລະຂອງຂ້າພະເຈົ້າຈະມີຄວາມສໍາຄັນຢ່າງແທ້ຈິງແມ່ນການເລືອກທາງທີ່ດີເລີດ, ເສັ້ນທາງແຫ່ງຄວາມຮັກຂອງພຣະເຈົ້າ.

## 2. 1 ໂກຣິນໂທ 13:4-7

*4 ຄວາມຮັກກໍອົດທົນດົນນານ ແລະຊອບໃນການເມດຕາກະຣຸນາ ຄວາມຮັກບໍ່ເຫິງສາ, ບໍ່ອວດອ້າງ, ບໍ່ຈອງຫອງ, 5 ບໍ່ເຮັດການອັນບໍ່ສຸພາບ, ບໍ່ຄຶດເຫັນແກ່ປໂຍດສ່ວນຕົວຝ່າຍດຽວ, ບໍ່ມີໃຈຮ້າຍງາຍ, ບໍ່ຊອບຈົດຈໍາຄວາມຜິດ. 6 ບໍ່ຍິນດີໃນການອະທັມແຕ່ຍິນດີໃນການສັດຈິງ. 7 ຄວາມຮັກສູ້ທົນທຸກສິ່ງ, ເຊື່ອທຸກສິ່ງ, ໄວ້ວາງໃຈໃນທຸກສິ່ງ, ແລະພຽນທົນເອົາທຸກສິ່ງ.*

ຄຳອະທິບາຍຄວາມຮັກໃນຂໍ້ພຣະຄັມພີເຫຼົ່ານີ້ບໍ່ມີຫັຍງກ່ຽວຂ້ອງກັບອາລົມ-ຄວາມຮູ້ສຶກຂອງພວກເຮົາ. ໃນຄວາມເປັນຈິງ, ຄຸນລັກສນະເຫຼົ່ານີ້ອະທິບາຍເຖິງການເລືອກທີ່ພວກເຮົາມັກຈະເຮັດ ເຖິງແມ່ນວ່າພວກເຮົາມີຄວາມຮູ້ສຶກແນວໃດກໍຕາມ. ຄຳນິຍາມຂອງຄວາມຮັກຂອງໂປໂລແມ່ນກ່ຽວກັບສິ່ງທີ່ພວກເຮົາໃຫ້ຄົນອື່ນດັ່ງທີ່ພວກເຮົາເຫັນແລະພົວພັນກັບພວກເຂົາ, ບໍ່ແມ່ນສິ່ງທີ່ພວກເຮົາຄາດຫັວງວ່າຈະໄດ້ຮັບ. ມັນປ່ຽນຈຸດໃຈກາງຂອງຈຸດສົນໃຈຂອງພວກເຮົາຈາກຂອງຕົວພວກເຮົາເອງໄປຫາຄົນອື່ນ. ຈົ່ງພິຈາຣະນາຄວາມອົດທົນ. ຄວາມອົດທົນຂອງພວກເຮົາມັນຈະມາຈາກຄວາມໃຈຮ້າຍທີ່ບໍ່ໄດ້ດັ່ງໃຈເມື່ອເຮົາຕ້ອງການ. ພວກເຮົາຕ້ອງການຜົນໄດ້ຮັບ, ແຕ່ວ່າຜູ້ໃດຜູ້ນຶ່ງຫຼືບາງສິ່ງບາງຢ່າງແມ່ນຢູ່ໃນທາງ. ໃນເວລາທີ່ພວກເຮົາສຸມໃຈໃສ່ໃນຕົນເອງ, ມັນຈະງ່າຍທີ່ຈະປະຕິເສດຄວາມຮູ້ສຶກຂອງຄົນອື່ນຫຼືປະຕິບັດຕໍ່ເຂົາເປັນການລົບກວນຕໍ່ເປົ້າໝາຍຂອງພວກເຮົາ. ຄວາມເມດຕາແມ່ນຕົວຊີ້ບອກຂອງຄວາມໝັ້ນຄົງຍາວນານຂອງຄູ່ແຕ່ງງານ. ການສຶກສາຄົ້ນພົບວ່າຄູ່ສົມຣົດທີ່ຕອບສນອງຕໍ່ການເຊື້ອເຊີນໃຫ້ມີສາຍສັມພັນກັບການພົວພັນອັນດີແມ່ນມີໂອກາດທີ່ຈະເປັນຄູ່ສົມຣົດຢູ່ກັນຍາວນານ. ການສຶກສານີ້ຍັງຄົ້ນພົບວ່າຄວາມເມດຕາແມ່ນຄ້າຍຄືກ້າມເນື້ອທີ່ທ່ານສາມາດເລືອກທີ່ຈະອອກກຳລັງກາຍໃນເວລາທີ່ທ່ານບໍ່ມີຄວາມຮູ້ສຶກດີໂດຍສະເພາະ, ເປັນຫຼັກການທີ່ໃຊ້ກັບຄວາມສັມພັນຂອງພວກເຮົາທັງໝົດ. ການເດີນໄປໃນຄວາມອົດທົນແລະຄວາມເມດຕາ-ສອງລັກສນະທີ່ລວມຢູ່ໃນຜົນຂອງພຣະວິນຍານ (ຄາລາເຕັຽ 5:22-23)-ສະທ້ອນໃຫ້ເຫັນຫົວໃຈຂອງຄວາມຖ່ອມຕົນ. ຫົວໃຈທີ່ຖ່ອມຕົນບໍ່ໄດ້ເບິ່ງຄົນອື່ນເປັນຄວາມຫຍຸ້ງຫຍາກຫຼືເປັນຄູ່ແຂ່ງຂັນ; ແທນທີ່ຈະເປັນຢ່າງນັ້ນ, ຫົວໃຈທີ່ຖ່ອມຕົນແມ່ນສັດຊື່ທີ່ຈະໃຫ້ອະພັຍແລະບໍ່ຈົດຈຳການກະທຳຜິດຂອງຜູ້ອື່ນ. ໂປໂລໄດ້ເຂົ້າເລິກໄປກ່ວານັ້ນອີກ. ທ່ານກຳນົດຄວາມຮັກເປັນການມຸ້ງໝັ້ນໃນສິ່ງທີ່ດີແລະເພື່ອຜົນປໂຍດທີ່ດີທີ່ສຸດຂອງຄົນອື່ນ. ການເຫັນຄົນອື່ນຫຼົງທາງ, ເດີນໄປໃນທາງຜິດ, ຫຼືສະດຸດລົ້ມລົງໃນບາບບໍ່ມີໂອກາດທີ່ຈະເວົ້າໂອ້ອວດປຽບທຽບຫຼືຊໍ້າເຕີມ, ຄວາມຮັກແມ່ນສັດຊື່ທີ່ຈະເຊື່ອໃນສິ່ງທີ່ດີທີ່ສຸດກ່ຽວກັບຄົນອື່ນແລະຍຶດໝັ້ນກັບພວກເຮົາບໍ່ວ່າຈະມີຂໍ້ຂັດແຍ່ງໃດໆ, ສິ່ງທີ່ທ້າທາຍ, ຫຼືສິ່ງໃດກໍຕາມ. ການຕໍ່ສູ້, ຄຳນິຍາມຂອງຄວາມຮັກນີ້ແມ່ນທາງເລືອກ, ນຶ່ງໃນລັກສນະທັງໝົດຂອງພວກເຮົາ. ທ່ານແລະຂ້າພະເຈົ້າດຳເນີນໃນຄວາມຮັກໄດ້ແນວໃດ? ຄວາມຈິງແມ່ນພວກເຮົາບໍ່ສາມາດ-ຢ່າງນ້ອຍບໍ່ແມ່ນຂອງພວກເຮົາເອງ. ເພື່ອໃຫ້ມີຄວາມຮັກຂອງພຣະເຈົ້າ, ກ່ອນອື່ນພວກເຮົາຕ້ອງໄດ້ຮັບຄວາມຮັກຂອງພຣະເຈົ້າກ່ອນ.

## 3. 1 ໂກຣິນໂທ 13:8-13

*8 ເຖິງແມ່ນການປະກາດພຣະທັມກໍຈະຖືກຍົກເລີກ, ຫລືການເວົ້າພາສາແປກໆ ກໍຈະເຊົາ ແລະວິຊາຄວາມຮູ້ກໍຈະຖືກຍົກເລີກເສັຽແຕ່ຄວາມຮັກຕັ້ງຢູ່ບໍ່ຂາດຈັກເທື່ອ. 9 ເພາະຄວາມຮູ້ຂອງພວກເຮົານັ້ນກໍບໍ່ສົມບູນ ແລະການປະກາດພຣະທັມກໍບໍ່ສົມບູນ. 10 ແຕ່ເມື່ອຄວາມສົມບູນມາເຖິງແລ້ວ ຄວາມບົກພ່ອງນັ້ນກໍຈະຖືກຍົກເລີກເສັຽ. 11 ເວລາເຮົາຍັງເປັນເດັກນ້ອຍຢູ່ນັ້ນ ເຮົາເຄີຍປາກແລະມີໃຈຢ່າງເດັກນ້ອຍ, ເຄີຍຄຶດຫາເຫດຜົນຢ່າງເດັກນ້ອຍ ແຕ່ເມື່ອເຮົາກາຍເປັນຄົນແກ່ແລ້ວ ເຮົາກໍໄດ້ເລີກອາການເດັກນ້ອຍນັ້ນເສັຽ. 12 ເພາະວ່າດຽວນີ້ເຮົາທັງຫລາຍເຫັນພໍມົວໆ ເໝືອນເບິ່ງໃນແວ່ນ ແຕ່ວ່າເວລານັ້ນຈະໄດ້ເຫັນພຣະພັກຢ່າງຄັກ ດຽວນີ້ຄວາມຮູ້ຂອງເຮົາບໍ່ສົມບູນ ແຕ່ວ່າເວລານັ້ນເຮົາຈະຮູ້ຢ່າງສົມບູນເໝືອນພຣະເຈົ້າຊົງຮູ້ຈັກເຮົາແລ້ວ. 13 ບັດນີ້ຍັງຕັ້ງຢູ່ສາມສິ່ງ ຄືຄວາມເຊື່ອ, ຄວາມຫວັງໃຈ, ແລະຄວາມຮັກ ແຕ່ສິ່ງທີ່ໃຫຍ່ກວ່າແມ່ນຄວາມຮັກ.*

ໂປໂລໄດ້ກັບໄປບ່ອນທີ່ທ່ານໄດ້ເລີ້ມຕົ້ນການສອນເຣື່ອງຄວາມຮັກແລະນຳເອົາເຣື່ອງຂອງປະທານຝ່າຍວິນຍານກັບມາອີກ. ຂອງປະທານທາງຝ່າຍວິນຍານທີ່ພວກເຮົານັບຖືຢ່າງສູງສົ່ງຈະຖືກຍົກເລີກໄປ, ແຕ່ "ຄວາມຮັກຍັງຕັ້ງຢູ່ບໍ່ຂາດຈັກເທື່ອ." ໂປໂລໄດ້ກ່າວເຖິງອະນາຄົດຂອງພວກເຮົາເປັນສ່ວນຂອງພຣະກາຍພຣະຄຣິດ. ຂອງປະທານທາງຝ່າຍວິນຍານເປັນປໂຍດສຳລັບຄຣິສຕະຈັກເພາະວ່າພວກເຮົາຍັງມີຊີວິດຢູ່ໃນຍຸກລະຫວ່າງການຟື້ນຄືນພຣະຊົນຂອງພຣະຄຣິດແລະການກັບມາຂອງພຣະອົງ. ແຕ່ເມື່ອພຣະເຢຊູກັບມາ, ພວກເຮົາຈະຢູ່ກັບພຣະອົງແລະເປັນຄືກັບພຣະອົງ. "ເມື່ອຄວາມສົມບູນແບບມາເຖິງ, ບາງສ່ວນຈະສິ້ນສຸດລົງ." ເມື່ອພຣະເຢຊູ, ຜູ້ທີ່ສົມບູນແບບ, ກັບຄືນມາ, ພຣະອົງຈະເປີດເຜີຍການຊົງສ້າງທີ່ສົມບູນແບບຂອງພຣະເຈົ້າ. ຄຳວ່າສົມບູນແບບນຳເອົາຄວາມຄິດທີ່ບໍ່ພຽງແຕ່ມີຄຸນນະພາບທີ່ດີເທົ່ານັ້ນ, ແຕ່ຍັງມີຄວາມສຳເຣັດນຳອີກ. ໃນປັດຈຸບັນ, ພວກເຮົາບໍ່ຮູ້ແລະມີປະສົບການຂອງພຣະເຈົ້າຢ່າງເຕັມທີ່. ແຕ່

ພວກເຮົາຈະເຫັນຕໍ່ຈາກນັ້ນ. ເຖິງແມ່ນວ່າທຸກສິ່ງທຸກຢ່າງໃນໂລກນີ້ຈະສູນຫາຍໄປ, ຄວາມຮັກຍັງຕັ້ງຢູ່. ຄວາມຮັກເປັນລັກສນະຂອງພຣະຄຣິດ, ບໍຣິສຸດແລະສົມບູນແບບ, ແລະຄວາມຮັກຈະເປັນສ່ວນນຶ່ງຂອງອານາຈັກທີ່ສົມບູນແບບຂອງພຣະອົງ. ນີ້ໝາຍຄວາມວ່າສິ່ງໃດກໍຕາມທີ່ເຮົາເຮັດດ້ວຍຄວາມຮັກແບບພຣະຄຣິດຈະຄົງຢູ່. ພວກເຮົາອາດຈະເປັນຄືກັບເດັກນ້ອຍໃນຕອນນີ້, ແຕ່ມື້ນຶ່ງພວກເຮົາຈະຄົບຖ້ວນສົມບູນໃນພຣະຄຣິດ, ແລະໃນມື້ນັ້ນ, ພວກເຮົາຈະ "ປະຖິ້ມຄວາມເປັນເດັກນ້ອຍ." ຖ້າພວກເຮົາຮູ້ວ່າເປົ້າໝາຍແລະຈຸດປະສົງຂອງຊີວິດຂອງພວກເຮົາແມ່ນເພື່ອຮັກພຣະເຈົ້າແລະຮັກຄົນອື່ນ, ທັສນະຂອງພວກເຮົາຈະປ່ຽນແປງ. ພວກເຮົາມີຊີວິດຢູ່ກັບຈຸດສຸດທ້າຍນີ້ຢູ່ໃນໃຈ, ແລະມັນເຮັດໃຫ້ພວກເຮົາມີສະຕິປັນຍາທີ່ຈະສຸມໃຈໃສ່ສິ່ງທີ່ສຳຄັນແທ້ໆ. ເວົ້າງ່າຍໆ, ພວກເຮົາເຕີບໂຕຂຶ້ນ. ຄວາມໝາຍຂອງການເຕີບໃຫຍ່ຂອງຄຣິສຕຽນຂອງພວກເຮົາແມ່ນຄວາມກ້ວາງຂອງຄວາມຮູ້ຂອງພວກເຮົາ; ມັນເປັນຄວາມເລິກຂອງຄວາມຮັກຂອງພວກເຮົາ. ຜູ້ທີ່ຢູ່ໃນຄວາມຮັກຂອງພຣະເຈົ້າໄດ້ສະແດງລັກສນະຂອງຄວາມຮັກແລະສະແດງຕົນເອງວ່າເປັນຜູ້ໃຫ່ຍທາງຝ່າຍວິນຍານ.

## ການນຳໃຊ້ໃນຊີວິດ

ພວກເຮົາຕ້ອງຮັກຄົນອື່ນເໝືອນດັ່ງພຣະເຈົ້າຮັກພວກເຮົາ. ເລືອກເອົານຶ່ງຂໍ້ຂອງການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ນັ່ງສະມາທິ.** ທ່ານບໍ່ສາມາດປະຖິ້ມສິ່ງທີ່ທ່ານບໍ່ໄດ້ຮັບ. ໃຊ້ເວລານັ່ງສະມາທິຢູ່ໃນ 1ໂກຣິນໂທ 13:4-7, ສຸມໃຈໃສ່ຄວາມຮັກທີ່ພຣະເຈົ້າມອບໃຫ້ທ່ານໃນພຣະຄຣິດ, ປ່ອຍໃຫ້ຄວາມຈິງເຫຼົ່ານັ້ນຈົມລົງເລິກຢູ່ໃນຈິດວິນຍານຂອງທ່ານ.
.
- **ສາທິດ.** ສຸມໃຈໃສ່ວິທີທີ່ທ່ານສາມາດໃຫ້ຄວາມຮັກກັບຜູ້ທີ່ຢູ່ໃນຊີວິດຂອງທ່ານໃນປັດຈຸບັນ. ວາງແຜນທີ່ຈະສະແດງຄວາມຮັກນັ້ນຕໍ່ຄົນຜູ້ນຶ່ງໃນອາທິດນີ້ໂດຍການສະແດງອອກດ້ວຍຄວາມຮັກ.

- **ແບ່ງປັນ.** ແບ່ງປັນຂໍ້ຄວາມແຫ່ງຄວາມຮັກຂອງພຣະເຈົ້າກັບບາງຄົນໃນອາທິດນີ້-**ທາງອີແມວ**, **ສົ່ງຂໍ້ຄວາມ**, **ຫຼືດ້ວຍຕົນເອງ**.

ເຖິງແມ່ນວ່າຜູ້ປອມແປງມີຄວາມຊັບຊ້ອນຫຼາຍໃນການສ້າງລາຍໄດ້ທີ່ຄ້າຍຄືກັບຂອງແທ້, ມັນກໍຍັງປອມບໍ່ວ່າມັນຈະດີປານໃດ. ດັ່ງນັ້ນ, ຜູ້ທີ່ຮູ້ຈັກການເງິນຕ້ອງເຕີບໃຫ່ຍໃນທັສນະຂອງເຂົາໃນການເຂົ້າໃຈຄວາມຈິງຈາກຄວາມຜິດພາດ. ໃນທາງດຽວກັນ, ພວກເຮົາຕ້ອງເຕີບໃຫ່ຍໃນຄວາມຮູ້ແລະການນຳໃຊ້ຄວາມຮັກຂອງພວກເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR.**